ດ່ວນທີ່ສຸດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງຫຼວງນ້ຳທາ

ຫ້ອງວ່າການແຂວງ

ເລກທີ..846../ຫວຂ

ຫຼວງນ້ຳທາ, ວັນທີ..03..ທັນວາ..2020

# ແຈ້ງການ

ຮຽນ: - ທ່ານ ເຈົ້າເມືອງຫຼວງນ້ຳທາ.

- ທ່ານ ຫົວໜ້າຄະນະຄຸ້ມຄອງເຂດເສດຖະກິດພິເສດແຂວງຫຼວງນ້ຳທາ ທີ່ນັບຖື.

ເລື່ອງ: ການປ້ອງກັນ ແລະ ຄວບຄຸມການລະບາດຂອງພະຍາດໂຄວິດ-19.

- ອີງຕາມ ສະພາບການລະບາດຂອງພະຍາດໂຄວິດ-19 ໃນປັດຈຸບັນ.
- ອີງຕາມ ທິດຊີ້ນຳຂອງຄະນະສະເພາະກິດເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດໂຄວິດ-19 ຂັ້ນແຂວງ, ລົງວັນທີ 03 ທັນວາ 2020.

ຫ້ອງວ່າການແຂວງ ຂໍຖືເປັນກຽດແຈ້ງທິດຊີ້ນຳຂອງຂັ້ນເທິງ ມາຍັງທ່ານຊາບວ່າ: ເພື່ອເປັນການປ້ອງກັນ, ສະກັດກັ້ນ ແລະ ຄວບຄຸມ ການລະບາດຂອງພະຍາດອັກເສບປອດພາຍພັນໃໝ່ (ໂຄວິດ-19) ບໍ່ໃຫ້ແຜ່ລາມອອກສູ່ວົງກວ້າງນັ້ນ, ມອບໃຫ້ເຈົ້າເມືອງຫຼວງນ້ຳທາ, ຄະນະຄຸ້ມຄອງເຂດເສດຖະກິດພິເສດແຂວງຫຼວງນ້ຳທາ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເປັນເຈົ້າການໃນການສຶກສາອົບຮົມປະຊາຊົນ ແລະ ບັນດາຜູ້ປະກອບການໃຫ້ເພີ່ມທະວີສະຕິລະວັງຕົວ, ປະຕິບັດມາດຕະການສະກັດກັ້ນ-ປ້ອງກັນພະຍາດດັ່ງກ່າວ ຢ່າງເຂັ້ມງວດ, ໃຫ້ມີຄວາມອຸ່ນອ່ຽນ ທຸ່ນທ່ຽງ, ບໍ່ໃຫ້ແຕກຕື່ນ, ພ້ອມທັງຊີ້ນຳໃຫ້ເຂົາເຈົ້າ ໃນໄລຍະນີ້ໃຫ້ຢູ່ບ້ານຢູ່ເຮືອນຂອງຕົນເປັນປົກກະຕິ ແລະ ໃຫ້ການຮ່ວມມື ໃນເວລາເຈົ້າໜ້າທີ່ລົງໄປເອົາຂໍ້ມູນ, ເກັບກຳສະພາບຄວາມເປັນຈິງ ເພື່ອແກ້ໄຂໃຫ້ທັນການ ທັງນີ້ກໍ່ເພື່ອຄວາມປອດໄພຂອງທຸກຄົນ.

❖ ເປົ້າໝາຍ:

1. ສຳລັບເມືອງຫຼວງນ້ຳທາ: ປະຊາຊົນເຂດບ້ານບໍ່ເຕັນ, ບ້ານນາເຕີຍ ແລະ ບ້ານບໍ່ປຽດ.
2. ສຳລັບເຂດເສດຖະກິດສະເພາະບໍ່ເຕັນແດນງາມ: ຜູ້ປະກອບການ ແລະ ປະຊາຊົນທີ່ອາໄສຢູ່ພາຍໃນເຂດ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ປະຕິບັດຕາມແຈ້ງການສະບັບນີ້ດ້ວຍ.

ວ່າການ ຫົວໜ້າຫ້ອງວ່າການແຂວງ

ແຂວງຫຼວງນ້ຳທາ ຫ້ອງວ່າການ

ຄຳເພັດ ຈັນທະວົງ

ບ່ອນນຳສົ່ງ:

| | | |
|---|---|---|
| 1. | ທ່ານເຈົ້າແຂວງ, ຮອງເຈົ້າແຂວງ ທ່ານລະ | 01 ສ/ບ. |
| 2. | ພາກສ່ວນທີ່ກ່ຽວຂ້ອງ | 01 ສ/ບ. |
| 3. | ສຳເນົາ | 02 ສ/ບ. |